ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ເລກທີ: 0474 /ກຜທ.ຫຂສພ.05
ນະຄອນຫຼວງວຽງຈັນ, ວັນທີ: 10 ສິງຫາ 2021

# ແຈ້ງການ

**ເຖິງ:** ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການສືບຕໍ່ຈັດຕັ້ງປະຕິບັດບັນດາມາດຕະການ ໃນການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 06 - 20 ພຶດສະພາ 2021.

- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021;
- ອີງຕາມ ແຈ້ງການ ຫສນຍ ສະບັບເລກທີ 462/ຫສນຍ, ລົງວັນທີ 05 ພຶດສະພາ 2021;
- ອີງຕາມ ແຈ້ງການຂອງກະຊວງ ອຄ ສະບັບເລກທີ 0337/ອຄ.ກອຫ, ລົງວັນທີ 06 ພຶດສະພາ 2021;
- ອີງຕາມ ແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0713/ກຜທ.ຫກ2, ລົງວັນທີ 06 ພຶດສະພາ 2021.

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ (ຫຂສພ) ຂໍແຈ້ງມາຍັງບັນດາທ່ານ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການສືບຕໍ່ຈັດຕັ້ງປະຕິບັດ ບັນດາມາດຕະການສະກັດກັ້ນ, ຄວບຄຸມ ເພື່ອລຸດຜ່ອນຄວາມສ່ຽງຈາກການລະບາດ ຂອງພະຍາດໂຄວິດ 19 ຕາມຄຳສັ່ງເລກທີ 15/ນຍ, ແຈ້ງການເລກທີ 406/ຫສນຍ, ແຈ້ງການ ເລກທີ 462/ຫສນຍ, ແຈ້ງການຂອງຂະແໜງການ, ອີງການກ່ຽວຂ້ອງ ແລະ ຄຳແນະນຳຂອງຄະນະສະເພາະກິດ ແຕ່ລະຂັ້ນວາງອອກ, ໂດຍສະເພາະບາງມາດຕະການທີ່ຈຳເປັນດັ່ງນີ້:

**1.** ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ/ນະຄອນຫຼວງ, ຜູ້ພັດທະນາ, ຜູ້ລົງທຶນ ກໍ່ຄືບັນດາໂຮງຈັກໂຮງງານ, ບໍລິສັດ, ຫ້າງຮ້ານ ຢູ່ໃນເຂດເສດຖະກິດພິເສດ (ຂສພ) ສືບຕໍ່ຈັດຕັ້ງປະຕິບັດບັນດາມາດຕະການ ເພື່ອປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ 19 ເຊັ່ນ:

1) ໃຫ້ມີມາດຕະການຈັດແບ່ງພະນັກງານ, ກຳມະກອນຂອງຕົນພັດປ່ຽນກັນມາປະຈຳການ ເພື່ອຮັກສາໄລຍະຫ່າງຕາມການແນະນຳຂອງຂະແໜງສາທາລະນະສຸກ, ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງ/ນະຄອນຫຼວງ ອອກບັດໃຫ້ພະນັກງານ, ກຳມະກອນ ທີ່ພັດປ່ຽນກັນມາປະຈຳການຢູ່ໃນ ຂສພ ຂອງຕົນ ເພື່ອເປັນເອກະສານຢັ້ງຢືນ ຕໍ່ເຈົ້າໜ້າທີ່ກວດກາ ຕາມເສັ້ນທາງຈາກບ່ອນພັກເຊົາມາສະຖານທີ່ເຮັດວຽກໃນ ຂສພ. ສຳລັບການເປີດດຳເນີນກິດຈະການຂອງໂຮງຈັກໂຮງງານ ແມ່ນໃຫ້ອີງຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0337/ອຄ.ກອຫ ແລະ ຄຳສັ່ງຂອງຄະນະສະເພາະກິດຂັ້ນແຂວງ;
2) ວັດແທກອຸນນະພູມພະນັກງານ, ກຳມະກອນ ເຊົ້າ ແລະ ແລງ, ສະໜອງເຈລ ລ້າງມື, ຜ້າອັດປາກ-ດັງ, ນ້ຳສະອາດ, ສີດຢາຂ້າເຊື້ອຢູ່ຫ້ອງການ, ໂຮງງານບ່ອນຜະລິດ ແລະ ຫ້ອງອາຫານ, ທີ່ພັກເປັນປົກກະຕິ;
3) ມີການອຳນວຍຄວາມສະດວກໃຫ້ແກ່ທີມແພດເຂົ້າໄປຕິດຕາມ, ກວດກາ ຫຼື ເຜີຍແຜ່ຄວາມຮູ້ກ່ຽວກັບພະຍາດ ໂຄວິດ 19 ເປັນໄລຍະ.



Scanned with CamScanner

2. ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ/ນະຄອນຫຼວງ ເອົາໃຈໃສ່ລົງເລິກຕິດຕາມ, ຄຸ້ມຄອງ ແລະ ສັງລວມສະພາບຜົນກະທົບຕໍ່ຊີວິດການເປັນຢູ່ ຂອງຜູ້ອອກແຮງງານ, ຜູ້ປະກອບການທຸລະກິດ ແລະ ຜູ້ທີ່ດຳລົງຊີວິດຢູ່ໃນ ເຂດເສດຖະກິດພິເສດ ໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ 19 ເພື່ອເປັນຂໍ້ມູນໃນການປຶກສາຫາລື, ຊອກຫາມາດຕະການຊ່ວຍເຫຼືອ ບັນເທົາທຸກແບບຮີບດ່ວນ ແລະ ວາງທິດທາງແຜນການຊ່ວຍເຫຼືອໃນຕໍ່ໜ້າ ແລ້ວລາຍງານໃຫ້ຄະນະສະເພາະກິດ ແລະ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຮັບຊາບເປັນປົກກະຕິ;
3. ສຳລັບ ຂສພ ທີ່ພົບຜູ້ຕິດເຊື້ອໂຄວິດ 19 ແມ່ນໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ປະສານກັບ ຄະນະສະເພາະກິດຕ້ານໂຄວິດ 19 ຢ່າງເປັນປົກກະຕິ ເພື່ອພ້ອມກັນຕິດຕາມກວດກາ ແລະ ເຝົ້າລະວັງການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ເປັນຕົ້ນແມ່ນ ໃຫ້ຮັກສາໄລຍະຫ່າງ, ການກັກຕົວ, ຈຳກັດບໍລິເວນ ແລະ ແຍກກຸ່ມຄົນທີ່ຕິກຢູ່ໃນກຸ່ມສ່ຽງອອກໄປຢູ່ບໍລິເວນທີ່ມີການຈັດສັນສະເພາະ ຕາມມາດຖານຂອງຄະນະສະເພາະກິດຕ້ານໂຄວິດ19 ກຳນົດໄວ້ ລວມເຖິງການສືບຕໍ່ສັກວັກຊິນໃຫ້ກັບຜູ້ພັດທະນາ, ຜູ້ລົງທຶນ ແລະ ແຮງງານທີ່ດຳລົງຊີວິດຢູ່ພາຍໃນເຂດໃຫ້ສຳເລັດ;
4. ໃຫ້ບັນດາ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ລາຍງານສະພາບການຈັດຕັ້ງປະຕິບັດໃຫ້ຄະນະສະເພາະກິດ ແລະ ຄະນະນຳຂັ້ນເທິງປອນເຂດຕັ້ງຢູ່ ພ້ອມທັງສົ່ງໃຫ້ ຫຂສພ ຮັບຊາບຢ່າງເປັນປົກກະຕິ (ປະຈຳອາທິດ ຫຼື ປະຈຳວັນຕາມກໍລະນີຮີບດ່ວນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ເຊັນແທນ/ຫົວໜ້າຫ້ອງການ
ສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ສອນປະເສີດ ດາລາວົງ



Scanned with CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ແຜນການ ແລະການລົງທຶນ

ເລກທີ 0713/ກຜທ.ຫກ2

ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2021

ດ່ວນທີ່ສຸດ

## ແຈ້ງການເພີ່ມເຕີມ

**ເຖິງ: ບັນດາທ່ານຫົວໜ້າກົມ, ຫ້ອງການ, ຫ້ອງການສູນສະຖິຕິແຫ່ງຊາດ, ຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ, ຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ, ຫ້ອງການສົ່ງເສີມ ແລະຄຸ້ມຄອງເຂດເສດຖະກິດພິເສດ, ສູນຄົ້ນຄວ້ານະໂຍບາຍການພັດທະນາ ສູນຝຶກອົບຮົມພະນັກງານຄຸ້ມຄອງເສດຖະກິດ-ແຜນການ ທີ່ນັບຖື,**

**ເລື່ອງ: ການຈັດຕັ້ງປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ຫຼຸດຜ່ອນຄວາມສ່ຽງຈາກການລະບາດຂອງພະຍາດ COVID-19 ຂອງກະຊວງ ແຜນການ ແລະການລົງທຶນ.**

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ກະຊວງແຜນການ ແລະການລົງທຶນ ສະບັບ ເລກທີ 201/ນຍ ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462/ຫສນຍ ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ຄຳເຫັນຊີ້ນຳ ຂອງຄະນະນຳກະຊວງແຜນການ ແລະ ການລົງທຶນ ຄັ້ງວັນທີ 5 ພຶດສະພາ 2021.

ກະຊວງແຜນການ ແລະ ການລົງທຶນ (ກຜທ) ຂໍຖືເປັນກຽດແຈ້ງເພີ່ມເຕີມມາຍັງບັນດາພາກສ່ວນກົມກອງພາຍໃນ ກຜທ ເພື່ອຍົກລະດັບໃນການຈັດຕັ້ງປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະຫຼຸດຜ່ອນຄວາມສ່ຽງຈາກການລະບາດຂອງພະຍາດ COVID-19 ດັ່ງລຸ່ມນີ້:

1. ໃຫ້ຄະນະພັກ, ຄະນະນຳ, ສະມາຊິກພັກ, ພະນັກງານລັດຖະກອນທັງໝົດ ພາຍໃນ ກຜທ ໃຫ້ສືບຕໍ່ຍົກສູງ ແລະ ເອົາໃຈໃສ່ປະຕິບັດຄຳສັ່ງ, ແຈ້ງການ ແລະ ມາດຕະການຕ່າງໆທີ່ໄດ້ວາງອອກຢ່າງເຂັ້ມງວດຄື: ຄຳສັ່ງ ເລກທີ 15/ນຍ ລົງວັນທີ 21 ເມສາ 2021; ແຈ້ງການເລກທີ 406/ຫສນຍ, ລົງວັນທີ 26 ເມສາ 2021; ແຈ້ງການ ເລກທີ 0656/ກຜທ, ລົງວັນທີ 22 ເມສາ 2021; ແຈ້ງການ ເພີ່ມເຕີມເລກທີ 0689/ ກຜທ.ຫກ2, ລົງວັນທີ 28 ເມສາ 2021 ແລະ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບ ເລກທີ 462/ຫສນຍ ລົງວັນທີ 5 ພຶດສະພາ 2021.
2. ໃຫ້ຄະນະພັກ, ຄະນະນຳເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ພະນັກງານລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນຜູ້ທີ່ເຫັນວ່າມີຄວາມສ່ຽງ (ກຸ່ມສ່ຽງ) ທີ່ໄດ້ສຳພັດ ຫຼື ໃກ້ຊິດກັບຜູ້ຕິດເຊື້ອໂດຍກົງ, ຜູ້ທີ່ໃກ້ຊິດກັບ ບຸກຄົນເປັນແມ່ນກຸ່ມສ່ຽງ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຄຳສັ່ງ ແລະ ຄຳແນະນຳຂອງຄະນະສະເພາະກິດ

Scanned with CamScanner

ຢ່າງເຂັ້ມງວດ ເປັນຕົ້ນແມ່ນ ການກວດຫາເຊື້ອ, ກັກປ່ຽວ, ການຕິດຕາມອາການ ແລະ ສຸຂະພາບຂອງແຕ່ລະຄົນໃນແຕ່ລະມື້ ແລະ ອາທິດ ໂດຍເຮັດເປັນຕາຕະລາງຕິດຕາມຜູ້ທີ່ກັກຕົນເອງຢູ່ບ້ານ (ຊື່ ແລະ ນາມສະກຸນ, ເພດ, ວັນສໍາພັດ ຫຼື ໃກ້ຊິດກັບກຸ່ມສ່ຽງ, ... ການເຄື່ອນໄຫວຜ່ານມາຂອງຜູ້ກ່ຽວ, ວັນສິ້ນສຸດການກັກຕົວ ໂດຍເລີ່ມນັບແຕ່ວັນທີ່ໄດ້ໃກ້ຊິດກັບກຸ່ມສ່ຽງເປັນຕົ້ນມາ, ຍົກເວັ້ນກໍລະນີມີອາການ ຫຼື ຕິດເຊື້ອ COVID-19). ແລ້ວລາຍງານມາຍັງກອງເລຂາຄະນະສະເພາະກິດ ກຜທ ເພື່ອສະຫຼຸບສັງລວມລາຍງານຄະນະນໍາ ກຜທ ເປັນປົກກະຕິ.

3. ຊີ້ນໍາພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຊາບຂໍ້ມູນຂ່າວສານຢ່າງຖືກຕ້ອງ ແລະ ທັນການ ທັນກັບເວລາ. ໃຫ້ເອົາໃຈໃສ່ກັ່ນກອງຂໍ້ມູນຂ່າວສານຕ່າງໆຢ່າງມີສະຕິລະວັງຕົວ, ຫ້າມເຜີຍແຜ່ຂໍ້ມູນຂ່າວໂດຍສະເພາະແມ່ນສື່ສັງຄົມອອນລາຍໃນທາງທີ່ບໍ່ສ້າງສັນມີລັກສະນະໃສ່ຮ້າຍປ້າຍສີ, ສ້າງຄວາມເຊື່ອມເສຍ, ໂຄສະນາຊວນເຊື່ອແບ່ງແຍກຄວາມສາມັກຄີ, ສ້າງຄວາມແຕກຕື່ນ, ທໍາລາຍຄວາມສະຫງົບສຸກຂອງປະຊາຊົນ.

4. ໃຫ້ເອົາໃຈໃສ່ສັງລວມຂໍ້ມູນກ່ຽວກັບການສັກຢາວັກຊີນປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ຂອງພະນັກງານພາຍໃນກົມກອງຂອງຕົນໂດຍສ້າງເປັນຕາ ຕະລາງຕິດຕາມທີ່ຊັດເຈນ ( ຊື່ ແລະ ນາມສະກຸນ, ວັນທີ່ໄດ້ສັກຢາເຂັມທີ 1, ປະເພດຢາທີ່ສັກ, ສະຖານທີ່ສັກ, ກໍານົດເວລາສັກຢາເຂັມທີ 2) ເພື່ອສັງລວມລາຍງານໃຫ້ກອງເລຂາເພື່ອກະກຽມ ແລະ ພ້ອມກັນ ... ລະດົມຊຸກຍູ້ພະນັກງານມາສັກຢາປ້ອງກັນໃນຮອບທີ 2 ຢ່າງມີປະສິດທິຜົນ.

5. ມອບໃຫ້ຫ້ອງການ ກຜທ ສົມທົບກັບກອງເລຂາຄະນະສະເພາະກິດ ຂອງ ກຜທ ຄົ້ນຄວ້າພິຈາລະນາອອກໜັງສືຢັ້ງຢືນໃຫ້ແກ່ພະນັກງານເປັນອັນສະເພາະໃນການມາເຄື່ອນໄຫວປະຈໍາການຢູ່ກົມກອງຂອງຕົນຕາມການມອບໝາຍ ຂອງກົມກອງຕົນ ໃນໄລຍະ ວັນທີ 6-20 ພຶດສະພາ 2021.

6. ໃຫ້ບັນດາກົມພາຍໃນ ກຜທ ສົ່ງບັນຊີລາຍຊື່ພະນັກງານທີ່ມາປະຈໍາການປະຕິບັດໜ້າທີ່ວິຊາສະເພາະຕົວຈິງໃນແຕ່ລະວັນແລ້ວລາຍງານກອງເລຂາຄະນະສະເພາະກິດ ກຜທ ເປັນລາຍວັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດດ້ວຍ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີ**

ສອນໄຊ ສີພັນດອນ

Scanned with CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເລກທີ 0337 /ອຄ.ກອຕ
ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2021

# ແຈ້ງການ

**ເຖິງ:** - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.
- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການທິດຊີ້ນຳກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462/ຫສນຍ, ລົງວັນທີ 5 ພຶດສະພາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ເຜີຍແຜ່, ແນະນຳ ແລະ ເພີ່ມທະວີການປະຕິບັດບັນດາມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.
2. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທຸກຂະໜາດ ແລະ ທຸກປະເພດ ທີ່ມີຄວາມຈຳເປັນເປີດດຳເນີນກິດຈະການໂຮງງານ ສາມາດດຳເນີນໄດ້ ແຕ່ຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກ ຢ່າງເຂັ້ມງວດ ດັ່ງນີ້:
   2.1 ໃຫ້ສ້າງແຜນກຳນົດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ຈັດຕັ້ງປະຕິບັດ ແລະ ລາຍງານຂະແໜງອຸດສາຫະກຳ ແລະ ການຄ້າ ເປັນປະຈຳ;
   2.2 ໃຫ້ຫຼຸດຈຳນວນພະນັກງານ ແລະ ກຳມະກອນລົງ ເພື່ອຮັກສາໄລຍະຫ່າງຂອງການເຮັດວຽກ ແລະ ຄວາມແອອັດ ໂດຍຈັດເປັນຫຼາຍຜຽນວຽກ ຫຼື ກະການເຮັດວຽກ;
   2.3 ຕ້ອງກວດວັດແທກອຸນຫະພູມພະນັກງານ, ກຳມະກອນ ຢູ່ປະຕູທາງເຂົ້າ-ອອກໂຮງງານ, ຫ້ອງການ ແລະ ສະຖານທີ່ເຮັດວຽກ ເປັນປະຈຳ. ກໍລະນີພົບເຫັນຜູ້ມີອາການໄຂ້ (ອຸນຫະພູມຮ່າງກາຍສູງກວ່າ 37,5 ອົງສາ



Scanned with CamScanner

ເຊ), ໄອ, ຈາມ, ຫາຍໃຈຍາກ ຫຼື ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ຽວຂອງໂຮງງານ ແລ້ວໂທປຶກສາສາຍດ່ວນ 165, 166 ແລະ ພົວພັນໃຫ້ແພດໝໍເຂົ້າກວດທັນທີ;

2.4 ຕ້ອງຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ ຢູ່ສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ບ່ອນພັກເຊົາຂອງໂຮງງານ. ໝາຍສັນຍາລັກເພື່ອກຳນົດການຮັກສາໄລະຍະຫ່າງ, ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ 1 ແມັດໄດ້ ຕ້ອງມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນ;

2.5 ຕ້ອງໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈຳນວນຫຼາຍ;

2.6 ຕ້ອງມີນ້ຳດື່ມສະອາດ, ມີບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື ຖືກຕາມຫຼັກການອະນາໄມ;

2.7 ໃຫ້ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

2.8 ຫ້າມເຮັດກິດຈະກຳຊຸມແຊວ ຫຼື ພົວພັນແບບໃກ້ຊິດທີ່ບໍ່ສາມາດຮັກສາໄລຍະຫ່າງ ຫຼື ກິດຈະກຳອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ.

3. ໃຫ້ຊຸກຍູ້ພະນັກງານ ແລະ ກຳມະກອນ ທີ່ເຮັດວຽກຢູ່ໃນໂຮງງານ ໄປສັກຢາວັກຊີນປ້ອງກັນພະຍາດໂຄວິດ-19.

4. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ເປັນແຕ່ລະໄລຍະ ເພື່ອສືບຕໍ່ລາຍງານກະຊວງ ແລະ ລັດຖະບານ.

6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 0310/ອຄ.ກອຫ, ລົງວັນທີ 23 ເມສາ 2021, ສະບັບເລກທີ 0324/ອຄ.ກອຫ, ລົງວັນທີ 26 ເມສາ 2021 ແລະ ສະບັບເລກທີ 0323/ອຄ.ກອຫ, ລົງວັນທີ 26 ເມສາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດ**

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

**ສົມຈິດ ອິນທະມິດ**



Scanned with CamScanner